ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະພັດທະນາຊົນນະບົດ ແລະ
ລຶບລ້າງຄວາມທຸກຍາກ ຂັ້ນສູນກາງ (ຄພທສ)
**ກອງທຶນຫຼຸດຜ່ອນຄວາມທຸກຍາກ (ທລຍ)** ເລກທີ 0111 /ທລຍ
ວັນທີ 09 FEB 2017

# ບົດສະຫລຸບການເຄື່ອນໄຫວວຽກງານ
# ປະຈຳເດືອນ ມັງກອນ 2017 ແລະ ແຜນວຽກເດືອນ ກຸມພາ 2017

## 1. ວຽກງານທີ່ພົ້ນເດັ່ນໃນເດືອນ ມັງກອນ 2017:

ການເຄື່ອນໄຫວວຽກລວມຂອງ ທລຍ ປະຈຳເດືອນມັງກອນ 2017 ແມ່ນໄດ້ສຸມໃສ່ບັນດາໜ້າວຽກສຳຄັນທີ່ເປັນບຸລິມະສິດ ກ່ອນການປິດບັນຊີໂຄງການ ທລຍ 2 ແລະ ເລີ່ມຈັດຕັ້ງປະຕິບັດ ທລຍ 3 ຢ່າງເປັນທາງການ ລວມທັງການຂຶ້ນງົບປະມານກິດຈະກຳຂອງປີ 2017 ຊຶ່ງແມ່ນປີທຳອິດຂອງ ທລຍ 3. ສຳລັບຄວາມຄືບໜ້າຂອງການກະກຽມຈັດຕັ້ງປະຕິບັດ ທລຍ 3 ນັ້ນ ທີມງານແມ່ນໄດ້ສຳເລັດການນຳສົ່ງລາຍຊື່ໂຄງການຍ່ອຍ ເພື່ອຂໍອະນຸມັດຈາກຜູ້ໃຫ້ທຶນແລ້ວ 6 ແຂວງ ແລະ ພວມດຳເນີນການຕື່ມ 4 ແຂວງ ຄາດວ່າຈະສຳເລັດໃນໄວນີ້. ສ່ວນໂຄງການຍ່ອຍບ້ວງທຶນສົມທົບລັດຖະບານ ແມ່ນໄດ້ນຳສົ່ງລາຍຊື່ເຖິງ ຄພທສ ແລ້ວ ແລະຈະໄດ້ຕິດຕາມ ແລະ ຂໍການຊີ້ນຳເພີ່ມຕື່ມ.

ອີກວຽກງານທີ່ພົ້ນເດັ່ນໃນເດືອນມັງກອນ 2017 ແມ່ນການຈັດກອງປະຊຸມສະພາບໍລິຫານ ທລຍ ຄັ້ງທີ 22 ຊຶ່ງໄດ້ຈັດຂຶ້ນໃນວັນທີ 31 ມັງກອນ 2017 ພາຍໃຕ້ການເປັນປະທານຂອງ ທ່ານ ປອ. ລຽນ ທິແກ້ວ ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້, ທັງເປັນປະທານສະພາບໍລິຫານຂອງກອງທຶນຫລຸດຜ່ອນຄວາມທຸກຍາກ, ພ້ອມດ້ວຍກຳມະການສະພາບໍລິຫານ ທີ່ມາຈາກບັນດາກະຊວງ ແລະ ແຂວງເປົ້າໝາຍຂອງ ທລຍ, ກົມ, ກອງ ແລະ ຈາກພະແນກກະສິກຳ ແລະ ປ່າໄມ້ແຂວງ, ຄະນະຮັບຜິດຊອບ ທລຍ ສູນກາງ, ຜູ້ປະສານງານ ທລຍ 10 ແຂວງ ໄດ້ເຂົ້າຮ່ວມຢ່າງພ້ອມພຽງກັນ. ພ້ອມກັນນັ້ນ ກອງປະຊຸມສະພາບໍລິຫານ ກໍຍັງໄດ້ຮັບກຽດຕ້ອນຮັບການເຂົ້າຮ່ວມຜູ້ຕາງໜ້າຈາກທະນາຄານໂລກ ແລະ ອົງການພັດທະນາຮ່ວມຂອງສະວິດເຊີແລນ, ຊຶ່ງມີຜູ້ແທນທັງໝົດ 62 ຄົນ, ຍິງ 11 ຄົນ. ຈຸດປະສົງກອງປະຊຸມໃນຄັ້ງນີ້ແມ່ນເພື່ອຕີລາຄາ ຜົນຂອງການຈັດຕັ້ງປະຕິບັດ ທລຍ 2 ໄລຍະ 5 ປີຜ່ານມາ (2012-2016) ແລະ ຜ່ານແຜນການ-ແຜນດຳເນີນງານ ທລຍ 3 (2017-2019). ສຳລັບບົດລາຍງານຜົນຂອງກອງປະຊຸມ ຈະໄດ້ນຳສົ່ງໃຫ້ທຸກພາກສ່ວນກ່ຽວຂ້ອງ ພາຍຫລັງທີ່ໄດ້ຮັບການເຫັນດີ ແລະ ລົງລາຍເຊັນຈາກປະທານສະພາບໍລິຫານ ທລຍ.

## 2. ຄວາມຄືບໜ້າໃນການຈັດຕັ້ງປະຕິບັດໂຄງການຍ່ອຍ ຮອບວຽນ 13 (ສົກປີ 2015-2016):

ການຈັດຕັ້ງປະຕິບັດ ຮອບວຽນ 13 ເຊິ່ງເປັນຮອບວຽນສຸດທ້າຍຂອງໂຄງການ ທລຍ ໄລຍະທີ 2 ທັງເປັນໄລຍະເຊື່ອມຕໍ່ລະຫວ່າງ ທລຍ ໄລຍະທີ 2 ແລະ ໄລຍະທີ 3 ແມ່ນມີຈຳນວນໂຄງການຍ່ອຍທັງໝົດ 505